ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

1252

ເລກທີ /ກຄພນ.ຄສລ
ນະຄອນຫຼວງວຽງຈັນ, ວັນທີ 27 ກັນຍາ 2018

# ແຈ້ງການ

**ຮຽນ:** - ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງວຽງຈັນ;
- ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງຄຳມ່ວນ;
- ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງຊຽງຂວາງ;

**ເລື່ອງ:** ໃຫ້ໂຈະການສົ່ງອອກເຂົ້າເປືອກຂອງບໍລິສັດທີ່ໄດ້ອະນຸຍາດໄປແລ້ວນັ້ນ.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ, ສະບັບເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010;
- ອີງຕາມ ແຈ້ງການ ສະບັບເລກທີ 1528/ກຄພນ.ຄສລ, ລົງວັນທີ 15 ທັນວາ 2017 ກ່ຽວກັບການເກັບຊື້ເຂົ້າ ເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ.

ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍແຈ້ງມາຍັງທ່ານຊາບວ່າ: ໃນຕົ້ນປີ 2018, ກົມການຄ້າພາຍໃນ ໄດ້ອອກໜັງສືໂດຍເຫັນດີໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງທີ່ກ່າວມາຂ້າງເທິງນັ້ນ ອອກອະນຸຍາດໃຫ້ບໍລິສັດສົ່ງອອກເຂົ້າເປືອກໄປຕ່າງປະເທດ ບົນພື້ນຖານການຢັ້ງຢືນຈາກຂະແໜງກະສິກຳ ແລະ ປ່າໄມ້ ແລະ ຕົວເລກການດູນດ່ຽງເຂົ້າກິນພາຍໃນແຂວງຕົນ ທີ່ເຫັນວ່າມີເຂົ້າເຫຼືອກິນ ແລະ ເປັນສິນຄ້າສົ່ງອອກ. ສະນັ້ນ, ຕໍ່ກັບສະພາບການໃນປະຈຸບັນ, ປະເທດເຮົາແມ່ນໄດ້ຮັບຜົນກະທົບທາງໄພພິບັດນ້ຳຖ້ວມໃນຫຼາຍຂົງເຂດໃນທົ່ວປະເທດ, ທີ່ຈະສົ່ງຜົນກະທົບທາງກົງ ແລະ ທາງອ້ອມຕໍ່ກັບການຂາດແຄນທາງດ້ານເຂົ້າກິນ. ເພື່ອຮັບປະກັນສະຖຽນລະພາບທາງດ້ານສະບຽງອາຫານໂດຍສະເພາະເຂົ້າກິນໃຫ້ມີການຕອບສະໜອງພຽງພໍກັບຄວາມຕ້ອງການພາຍໃນ ທາງດ້ານປະລິມານ, ຄຸນນະພາບ ແລະ ລາຄາ, ຈິ່ງແຈ້ງມາຍັງທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງວຽງຈັນ, ແຂວງຄຳມ່ວນ ແລະ ແຂວງຊຽງຂວາງ ໃຫ້ຄວາມຮ່ວມມື ແລະ ປະຕິບັດ ດັ່ງນີ້:

1. ໃຫ້ສືບຕໍ່ປະຕິບັດຕາມແຈ້ງການ ສະບັບເລກທີ 1528/ກຄພນ.ຄສລ, ລົງວັນທີ 15 ທັນວາ 2017 ຢ່າງເຂັ້ມງວດ;
2. ໃຫ້ໂຈະການສົ່ງອອກເຂົ້າ ໂດຍສະເພາະເຂົ້າເປືອກ (ທຸກຊະນິດ) ໄປຕ່າງປະເທດຂອງບໍລິສັດ ທີ່ ກົມການຄ້າພາຍໃນໄດ້ອອກໜັງສືເຖິງ:

- ພະແນກອຸດສາຫະກຳ ແລະ ການຄ້າແຂວງວຽງຈັນ ຕາມເອກະສານສະບັບເລກທີ 0018/ກຄພນ.ຄສລ, ລົງວັນທີ 03 ມັງກອນ 2018 ກ່ຽວກັບການສະເໜີຂໍສົ່ງອອກເຂົ້າເປືອກ ຈຳນວນ 5,500 ໂຕນ ຂອງ ບໍລິສັດ ເພື່ອນພັດທະນາຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ ແລະ ເອກະສານສະບັບເລກທີ 0120/ກຄພນ.ກກຄ, ລົງວັນທີ 19 ມັງກອນ 2018 ກ່ຽວກັບການສະເໜີຂໍສົ່ງອອກເຂົ້າເປືອກໜຽວ ຈຳນວນ 6,500 ໂຕນ ໄປ ສສ ຫວຽດນາມ ຂອງບໍລິສັດ ວົງເຈືອງຮຸຍ;

- ພະແນກອຸດສາຫະກຳ ແລະ ການຄ້າແຂວງຄຳມ່ວນ ຕາມເອກະສານ ສະບັບເລກທີ 0016/ກຄພນ.ຄສລ, ລົງວັນທີ 03 ມັງກອນ 2018 ກ່ຽວກັບການສະເໜີສົ່ງອອກເຂົ້າເປືອກໜຽວ ຈຳນວນ 5,000 ໂຕນ ຂອງ ບໍລິສັດ ເລສຸກ ການຄ້າ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ;
- ພະແນກອຸດສາຫະກຳ ແລະ ການຄ້າແຂວງຊຽງຂວາງ ຕາມເອກະສານສະບັບເລກທີ 0091/ກຄພນ.ຄສລ, ລົງວັນທີ 15 ມັງກອນ 2018 ກ່ຽວກັບການສະເໜີສົ່ງອອກເຂົ້າເປືອກໜຽວ ຈຳນວນ 5,000 ໂຕນ ຂອງ ລັດວິສາຫະກິດ ພັດທະນາການຄ້າ ຂາອອກ-ຂາເຂົ້າແຂວງຊຽງຂວາງ;

3. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງທີ່ກ່າວມາຂ້າງເທິງນັ້ນ, ກວດກາຄືນຕົວເລກເຂົ້າເປືອກທີ່ບັນດາບໍລິສັດໄດ້ເກັບຊື້ຈາກປະຊາຊົນໄວ້ແລ້ວນັ້ນ, ເພື່ອຢັ້ງຢືນໃນການສົ່ງອອກ ແລະ ຫ້າມເກັບຊື້ຕື່ມ (ອະນຸຍາດໃຫ້ສົ່ງອອກສະເພາະສ່ວນທີ່ເຫຼືອເກັບຊື້ທ້ອນໂຮມໄວ້ເທົ່ານັ້ນ, ກ່ອນຈະມີແຈ້ງການສະບັບນີ້ອອກ);
4. ໃຫ້ເອົາໃຈໃສ່ຄຸ້ມຄອງ, ຕິດຕາມ, ກວດກາ ໂດຍມອບໃຫ້ເຈົ້າໜ້າທີ່ກວດກາການຄ້າຢູ່ຂັ້ນແຂວງ ແລະ ຂັ້ນເມືອງ ເປັນເຈົ້າການຈັດຕັ້ງປະຕິບັດ ບົນພື້ນຖານປະສານສົມທົບກັບຂະແໜງການກ່ຽວຂ້ອງ, ຖ້າຫາກພົບເຫັນໃນກໍລະນີລະເມີດລະບຽບ ແມ່ນໃຫ້ໃຊ້ມາດຕະການຢ່າງເຂັ້ມງວດ;
5. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງຂ້າງເທິງລາຍງານຕົວເລກຂອງການສົ່ງອອກເຂົ້າເປືອກ ຕາມການອະນຸຍາດຜ່ານມາຂອງແຕ່ລະບໍລິສັດ, ປະຕິໄດ້ເທົ່າໃດ, ຍັງເທົ່າໃດ ຕາມຕົວເລກສະເໜີຂໍສົ່ງອອກ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອໃຫ້ຄວາມຮ່ວມມືໃນການປະຕິບັດດ້ວຍ.

**ຫົວໜ້າກົມ**

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ບຸນຫຼົງ ແກ້ວສີພາ